ບໍລິສັດ ລາວເວີນ ມະຫາຊົນ

ເອກະສານລາຍງານການເງິນລວມ ໂດຍຫຍໍ້ (ກ່ອນທົບທວນຄືນ)

ສຳລັບໄລຍະເກົ້າເດືອນ ສິ້ນສຸດ ວັນທີ 30 ກັນຍາ 2022

ບໍລິສັດ ລາວເວີນ ມະຫາຊົນ

ສາລະບານ

	ໜ້າ
ໃບລາຍງານຖານະການເງິນລວມກິດຈະການ	1 - 2
ໃບລາຍງານຜົນການດຳເນີນງານລວມກິດຈະການ	3
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງລວມກິດຈະການ	4
ໃບລາຍງານກະແສເງິນສົດລວມກິດຈະການ	5 - 6
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນລວມກິດຈະການ	7 - 16

ບໍລິສັດ ລາວເວີນ ມະຫາຊົນ

ໃບລາຍງານຖານະການເງິນລວມກິດຈະການ
ນະວັນທີ 30 ກັນຍາ 2022

	ບົດອະທິບາຍເລກທີ	ກ່ອນທົບທວນຄືນ 30 ກັນຍາ 2022 ກີບ	ກວດສອບ 31 ທັນວາ 2021 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ທຽບເທົ່າເງິນສົດ	4	4,382,426,506	3,993,063,772
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		78,468,986,492	38,585,096,648
ເຄື່ອງໃນສາງ		3,022,104,083	2,749,444,618
ຊັບສິນໝຸນວຽນອື່ນໆ		11,807,048,725	7,015,632,533
ລວມຊັບສິນໝຸນວຽນ		**97,680,565,806**	**52,343,237,571**
ຊັບສິນບໍ່ໝຸນວຽນ			
ຊັບສິນບັດ, ອາຄານ ແລະ ອຸປະກອນ	5	134,296,478,311	140,554,520,773
ຊັບສິນເພື່ອການລົງທຶນ	6	430,394,524,170	435,472,166,177
ຊັບສິນທີ່ບໍ່ມີຕົວຕົນ		213,630,025	98,152,365
ຊັບສິນບໍ່ໝຸນວຽນອື່ນໆ		6,913,648,029	42,642,499,803
ລວມຊັບສິນບໍ່ໝຸນວຽນ		**571,818,280,536**	**618,767,339,118**
ລວມຊັບສິນ		**669,498,846,341**	**671,110,576,689**
ໜີ້ສິນ ແລະ ທຶນເຈົ້າຂອງ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		202,288,475,591	177,816,109,829
ເງິນກູ້ຢືມໄລຍະສັ້ນ	7	30,399,873,525	32,832,427,077
ລາຍຮັບຮັບລ່ວງໜ້າ - ໄລຍະສັ້ນ		4,240,667,822	4,498,582,442
ໜີ້ສິນໝຸນວຽນອື່ນໆ		39,125,613,132	34,615,892,487
ລວມໜີ້ສິນໝຸນວຽນ		**276,054,630,070**	**249,763,011,836**

ບໍລິສັດ ລາວເວີ້ນ ມະຫາຊົນ

ໃບລາຍງານຖານະການເງິນລວມກິດຈະການ
ນະວັນທີ 30 ກັນຍາ 2022

	ບົດອະທິບາຍເລກທີ	*ກ່ອນທົບທວນຄືນ 30 ກັນຍາ 2022* ກີບ	*ກວດສອບ 31 ທັນວາ 2021* ກີບ
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ	7	21,596,220,436	14,007,926,448
ລາຍຮັບຮັບລ່ວງໜ້າ - ໄລຍະຍາວ		307,716,019,361	311,325,683,184
ລວມໜີ້ສິນບໍ່ໝຸນວຽນ		**329,312,239,797**	**325,333,609,632**
ລວມໜີ້ສິນ		**605,366,869,867**	**575,096,621,468**
ທຶນເຈົ້າຂອງ			
ທຶນຈົດທະບຽນ		79,121,818,000	79,121,818,000
ສ່ວນເກີນມູນຄ່າຮຸ້ນ		33,581,993,681	33,581,993,681
ຄັງສຳຮອງຈາກການຮ່ວມທຸລະກິດທີ່ຢູ່ພາຍໃຕ້ການຄວບຄຸມດຽວກັນ		(12,996,191,989)	(12,996,191,989)
ຄັງສຳຮອງຕາມລະບຽບການ		13,357,587,776	13,357,587,776
ກຳໄລສະສົມ		(48,933,230,994)	(17,051,252,246)
ລວມທຶນເຈົ້າຂອງ		**64,131,976,474**	**96,013,955,222**
ລວມໜີ້ສິນ ແລະ ທຶນເຈົ້າຂອງ		**669,498,846,341**	**671,110,576,689**

ທ່ານ ນາງ ສີພອນຄຳ ດວງດາລາ
ຜູ້ອຳນວຍການໃຫຍ່

ທ່ານ ນາງ ລຳເງິນ ມາດມະນີວົງ
ຮອງຜູ້ອຳນວຍການໃຫຍ่ ฝ่ายบัญชี-การเงิน

ນະຄອນຫຼວງວຽງຈັນ, ສປປ ລາວ

14 ພະຈິກ 2022

ບໍລິສັດ ລາວເວີນ ມະຫາຊົນ

ໃບລາຍງານຜົນການດຳເນີນງານລວມກິດຈະການ
ສຳລັບໄລຍະເກົ້າເດືອນສິ້ນສຸດ ວັນທີ 30 ກັນຍາ 2022

	ບົດອະທິບາຍ ເລກທີ	*ກ່ອນທົບທວນຄືນ ສຳລັບໄລຍະ 3 ເດືອນ ວັນທີ 30 ກັນຍາ 2022 ກີບ*	*ກ່ອນທົບທວນຄືນ ສຳລັບໄລຍະ 3 ເດືອນ ວັນທີ 30 ກັນຍາ 2021 ກີບ*
ລາຍຮັບຈາກການຂາຍ ແລະ ການບໍລິການ		34,228,371,331	5,465,405,672
ຕົ້ນທຶນໃນການຂາຍ ແລະ ການບໍລິການ		(23,330,242,283)	(5,507,411,960)
ກຳໄລຂັ້ນຕົ້ນ		**10,898,129,049**	**(42,006,288)**
ລາຍຈ່າຍບໍລິຫານ		(14,216,876,093)	(5,065,127,047)
ລາຍຮັບອື່ນໆ		318,953,520	94,984,199
(ຂາດທຶນ)/ກຳໄລ ຈາກອັດຕາແລກປ່ຽນ, ສຸດທິ		(28,506,285,259)	(228,855,140)
ຂາດທຶນຈາກການດຳເນີນງານ		**(31,506,078,783)**	**(4,779,430,996)**
ລາຍຈ່າຍດອກເບ້ຍ		(375,899,964)	(322,892,115)
ຂາດທຶນ ກ່ອນຫັກອາກອນກຳໄລ	**9**	**(31,881,978,747)**	**(5,102,323,111)**
ອາກອນກຳໄລ		-	-
ຂາດທຶນພາຍໃນໄລຍະ		**(31,881,978,747)**	**(5,102,323,111)**
ກຳໄລຕໍ່ຮຸ້ນ		*(806)*	*(129)*

ບໍລິສັດ ລາວເວີນ ມະຫາຊົນ LAO WORLD PUBLIC COMPANY

ທ່ານ ນາງ ສີພອນຄຳ ດວງດາລາ
ຜູ້ອຳນວຍການໃຫຍ່

ທ່ານ ນາງ ລຳເງິນ ມາດມະນີວົງ
ຮອງຜູ້ອຳນວຍການໃຫຍ່ ຝ່າຍບັນຊີ-ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

14 ພະຈິກ 2022

ບໍລິສັດ ລາວເວີນ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງລວມກິດຈະການ
ສຳລັບໄລຍະເກົ້າເດືອນສິ້ນສຸດ ວັນທີ 30 ກັນຍາ 2022

	ທຶນຈົດທະບຽນ ກີບ	*ສ່ວນເກີນມູນຄ່າຮຸ້ນ ກີບ*	*ຄັງສຳຮອງຕາມລະບຽບ ການ ກີບ*	*ກຳໄລສະສົມ ກີບ*	*ຄັງສຳຮອງຈາກການ ຮ່ວມທຸລະກິດທີ່ຢູ່ພາຍ ໃຕ້ການຄວບຄຸມດຽວ ກັນ ກີບ*	*ລວມ ກີບ*
ນະວັນທີ 01 ກໍລະກົດ 2022	**79,121,818,000**	**33,581,993,681**	**13,357,587,776**	**(17,051,252,246)**	**(12,996,191,989)**	**96,013,955,222**
ຂາດທຶນພາຍໃນໄລຍະ	-	-	-	(31,881,978,747)	-	(31,881,978,747)
ນະວັນທີ 30 ກັນຍາ 2022	**79,121,818,000**	**33,581,993,681**	**13,357,587,776**	**(48,933,230,994)**	**(12,996,191,989)**	**64,131,976,474**
ນະວັນທີ 01 ກໍລະກົດ 2021	**79,121,818,000**	**33,581,993,681**	**13,357,587,776**	12,011,919,645	**(12,996,191,989)**	125,077,127,114
ຂາດທຶນພາຍໃນໄລຍະ	-	-	-	(5,102,323,111)	-	(5,102,323,111)
ນະວັນທີ 30 ກັນຍາ 2021	**79,121,818,000**	**33,581,993,681**	**13,357,587,776**	**6,909,596,533**	**(12,996,191,989)**	**119,974,804,329**

ບໍລິສັດ ລາວເວີນ ມະຫາຊົນ LAO WORLD PUBLIC COMPANY

ທ່ານ ນາງ ສີພອນຄຳ ດວງດາລາ
ຜູ້ອຳນວຍການໃຫຍ່

ທ່ານ ນາງ ລຳເງິນ ມາດມະນີວົງ
ຮອງຜູ້ອຳນວຍການໃຫຍ່ ຝ່າຍບັນຊີ-ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

14 ພະຈິກ 2022

ບໍລິສັດ ລາວເວີນ ມະຫາຊົນ

ໃບລາຍງານກະແສເງິນສົດລວມກິດຈະການ
ສຳລັບໄລຍະເກົ້າເດືອນສິ້ນສຸດ ວັນທີ 30 ກັນຍາ 2022

	ບົດອະທິບາຍ ເລກທີ	*ກ່ອນທົບທວນຄືນ ສຳລັບໄລຍະ 3 ວັນທີ 30 ກັນຍາ 2022*	*ກ່ອນທົບທວນຄືນ ສຳລັບໄລຍະ 3 ວັນທີ 30 ກັນຍາ 2021*
		ກີບ	*ກີບ*
ກິດຈະກຳການດຳເນີນງານ			
ຂາດທຶນພາຍໃນໄລຍະ		**(31,881,978,747)**	**(5,102,323,111)**
ດັດແກ້ສຳລັບ:			
ຄ່າຫຼຸ້ຍຫ້ຽນຫັກພາຍໃນໄລຍະ		10,107,702,734	3,826,582,333
ຄ່າເສື່ອມຫັກພາຍໃນໄລຍະ		29,893,375	16,033,716
ເງິນແຮສຳລັບໜີ້ສິງໄສ		(1,397,005,384)	-
ເງິນແຮສຳລັບເຄື່ອງໃນສາງ		-	-
ຂາດທຶນ/(ກຳໄລ) ຈາກອັດຕາການແລກປ່ຽນທີ່ບໍ່ເກີດຂຶ້ນຈິງ		5,063,680,890	304,407,319
ລາຍຈ່າຍດອກເບ້ຍ		375,899,964	322,892,115
ດັດແກ້ເງິນທຶນໝຸນວຽນ:			
ການປ່ຽນແປງເຄື່ອງໃນສາງ		(272,659,465)	46,045,586
ການປ່ຽນແປງໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(43,278,300,652)	565,337,343
ການປ່ຽນແປງຊັບສິນໝຸນວຽນ ແລະ ບໍ່ໝຸນວຽນ		35,728,851,773	1,761,445,229
ການປ່ຽນແປງໜີ້ຕ້ອງສິ່ງການຄ້າ ແລະ ໜີ້ຕ້ອງສິ່ງອື່ນໆ		24,844,032,010	1,025,027,815
ການປ່ຽນແປງໜີ້ສິນໝຸນວຽນອື່ນໆ		547,975,971	(2,255,487,985)
ດອກເບ້ຍຈ່າຍ		(821,449,750)	(322,892,115)
ອາກອນກຳໄລທີ່ຈ່າຍ		-	-
ກະແສເງິນສົດສຸດທິທີ່ໃຊ້ໃນກິດຈະກຳການດຳເນີນງານ		**603,398,817**	**(187,068,245)**
ກິດຈະກຳການລົງທຶນ			
ຊັບສິນບັດ, ອາຄານ ແລະ ອຸປະກອນ		(400,261,859)	(308,290,263)
ກະແສເງິນສົດສຸດທິທີ່ໃຊ້ໃນກິດຈະກຳການລົງທຶນ		**(400,261,859)**	**(308,290,263)**
ກິດຈະກຳການທາງເງິນ			
ເງິນກູ້ຢືມໄລຍະຍາວຈາກທະນາຄານ			
ຈ່າຍຄືນເງິນກູ້ຢືມທະນະຄານ		(289,323,370)	-
ກະແສເງິນສົດສຸດທິຈາກກິດຈະກຳທາງການເງິນ		**(289,323,370)**	**-**
(ຫຼຸດລົງ)/ເພີ່ມຂຶ້ນ ສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		**(86,186,412)**	**(121,222,018)**

ບໍລິສັດ ລາວເວີ້ນ ມະຫາຊົນ

ໃບລາຍງານກະແສເງິນສົດລວມກິດຈະການ (ຕໍ່)
ສຳລັບໄລຍະເກົ້າເດືອນສິ້ນສຸດ ວັນທີ 30 ກັນຍາ 2022

	ບົດອະທິບາຍ ເລກທີ	ກ່ອນທົບທວນຄືນ ສຳລັບໄລຍະ 3 ວັນທີ 30 ກັນຍາ 2022 ກີບ	ກ່ອນທົບທວນຄືນ ສຳລັບໄລຍະ 3 ວັນທີ 30 ກັນຍາ 2021 ກີບ
ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນໄລຍະ		**3,993,063,772**	**3,994,308,537**
ກຳໄລຈາກການແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		475,549,146	(304,407,320)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ທ້າຍໄລຍະ		**4,382,426,506**	**3,568,679,199**

ທ່ານ ນາງ ສີພອນຄຳ ດວງດາລາ
ຜູ້ອຳນວຍການໃຫຍ່

ທ່ານ ນາງ ລຳເງິນ ມາດມະນີວົງ
ຮອງຜູ້ອຳນວຍການໃຫຍ່ ຝ່າຍບັນຊີ-ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

14 ພະຈິກ 2022

1. ຂໍ້ມູນທົ່ວໄປບໍລິສັດ

ບໍລິສັດ ລາວເວີນ ມະຫາຊົນ ("ບໍລິສັດ") ແມ່ນບໍລິສັດມະຫາຊົນທີ່ສ້າງຕັ້ງຂຶ້ນພາຍໃຕ້ກົດໝາຍວ່າດ້ວຍວິສາຫະກິດແຫ່ງ ສ.ປ.ປ ລາວ ໂດຍອີງຕາມໃບອະນຸຍາດການລົງທຶນສະບັບເລກທີ 065-13/ຜທ/ລທ.4 ອອກໂດຍກະຊວງແຜນການ ແລະ ການລົງທຶນ ໃນວັນທີ 13 ທັນວາ 2013. ບໍລິສັດຍັງໄດ້ຮັບໃບອະນຸຍາດການດຳເນີນທຸລະກິດສະບັບປັບປຸງ ເລກທີ 0748/ຈທວ ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ ໃນວັນທີ 21 ສິງຫາ 2017.

ກິດຈະກຳຫຼັກຂອງກຸ່ມບໍລິສັດມີດັ່ງນີ້:

- ບໍລິການໃຫ້ເຊົ່າພື້ນທີ່ ແລະ ຫ້ອງ
- ງານວາງສະແດງສິນຄ້າ
- ບໍລິການຈັດງານລ້ຽງ
- ຮ້ານອາຫານ ແລະ ເຄື່ອງດື່ມ
- ກິດຈະການບັນເທີງ

ຮຸ້ນຂອງບໍລິສັດໄດ້ມີການຊື້ຂາຍຄັ້ງທຳອິດພາຍໃຕ້ຮຸ້ນຂອງ" LWPC" ທີ່ຕະຫຼາດຫຼັກຊັບລາວ (" ຕະຫຼາດຫຼັກຊັບລາວ") ໃນ ວັນທີ 25 ທັນວາ 2013. ໃນວັນທີ 30 ກັນຍາ 2022, ຈຳນວນຮຸ້ນສາມັນທີ່ໄດ້ຮັບອະນຸຍາດທັງໝົດແມ່ນ 39,560,909 ຮຸ້ນ (ປີ 2020: 39,560,909 ຮຸ້ນ) ທີ່ມີມູນຄ່າໜ້າໃບເທົ່າກັບ 2,000 ກີບຕໍ່ຮຸ້ນ. ຮຸ້ນທີ່ອອກແມ່ນຈ່າຍເຕັມທັງໝົດ.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ສູນການວາງສະແດງ ແລະ ການປະຊຸມການຄ້າລາວສາກົນ ("Lao-ITECC"), ຖະໜົນ ກຳແພງເມືອງ, ບ້ານໂພນທັນເໜືອ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປລາວ.

ໂຄງສ້າງຂອງບໍລິສັດ

ບໍລິສັດມີ 01 ບໍລິສັດໃນເຄືອ, ເຊິ່ງໄດ້ລວມເຂົ້າໃນເອກະສານລາຍງານການເງິນລວມກິດຈະການສຳລັບຫົກເດືອນຕົ້ນປີຂອງ ບໍລິສັດ:

ບໍລິສັດ ລາວເວີນ ສະຫວັນ ຈຳກັດ

ບໍລິສັດໃນເຄືອນີ້ໄດ້ຖືກສ້າງຕັ້ງຂຶ້ນພາຍໃຕ້ກົດໝາຍວ່າດ້ວຍວິສາຫະກິດຂອງ ສປປ ລາວໂດຍອີງຕາມໃບອະນຸຍາດການ ດຳເນີນທຸລະກິດ ສະບັບເລກທີ 539/ຈທວ , ລົງວັນທີ 31 ກໍລະກົດ 2012 ແລະ ໄດ້ຮັບໃບທະບຽນວິສາຫະກິດສະບັບປັບປຸງ ລ່າສຸດ ເລກທີ 0078/ຈທວ ຕາມຮູບແບບຂອງບໍລິສັດຮັບຜິດຊອບຈຳກັດ, ອອກໂດຍ ພະແນກອຸດສາຫະກຳ ແລະ ການຄ້າ ໃນແຂວງສະຫວັນນະເຂດ ນະວັນທີ 03 ມີນາ 2021. ສຳນັກງານໃຫຍ່ຂອງ ບໍລິສັດ ລາວເວີນ ສະຫວັນ ຈຳກັດ ຕັ້ງ ຢູ່ສູນການຄ້າການວາງສະແດງ ແລະ ການປະຊຸມ ລາວສາກົນ ສະຫວັນ ("ສະຫວັນ - ໄອເຕັກ"), ເມືອງໄກສອນ, ແຂວງ ສະຫວັນນະເຂດ. ກິດຈະກຳຫຼັກຂອງ ບໍລິສັດ ລາວເວີນ ສະຫວັນ ຈຳກັດ ແມ່ນໃຫ້ບໍລິການກ່ຽວກັບການເຊົ່າພື້ນທີ່ ແລະ ຫ້ອງເຊົ່າ, ການວາງສະແດງ, ການຈັດງານລ້ຽງ ແລະ ການບັນເທີງ.

ນະວັນທີ 30 ກັນຍາ 2022, ບໍລິສັດໄດ້ຖືຮຸ້ນໃນສັດສ່ວນ 100% ແລະ ພ້ອມທັງໄດ້ຮັບສິດການອອກຄະແນນສຽງ 100% ໃນບໍລິສັດໃນເຄືອດັ່ງກ່າວ (31 ທັນວາ 2021: 100%).

2. ພື້ນຖານໃນການກະກຽມ

2.1 ນະໂຍບາຍຂອງການບັນຊີ

ເອກະສານລາຍງານການເງິນລວມຂອງບໍລິສັດ ແລະ ບໍລິສັດໃນເຄືອ (" ກຸ່ມບໍລິສັດ") ໄດ້ຖືກກະກຽມໂດຍມູນຄ່າຕົ້ນທຶນເດີມ. ເອກະສານລາຍງານການເງິນລວມກິດຈະການສຳລັບສາມເດືອນສິ້ນສຸດ 30 ກັນຍານີ້ ແມ່ນຖືກສະແດງເປັນສະກຸນເງິນກີບ ("LAK").

ເອກະສານລາຍງານການເງິນລວມກິດຈະການສຳລັບສາມເດືອນສິ້ນສຸດ 30 ກັນຍາ ໄດ້ກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີ ດັ່ງທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3. ນະໂຍບາຍການບັນຊີເຫຼົ່ານີ້ບໍ່ໄດ້ມີຈຸດປະສົງນຳສະເໜີຕໍ່ໃບລາຍງານຖານະການເງິນລວມ, ຜົນໄດ້ຮັບລວມຂອງການດຳເນີນງານ ແລະ ກະແສເງິນສົດລວມກິດຈະການສຳລັບສາມເດືອນສິ້ນສຸດ 30 ກັນຍາ 2022 ຂອງກຸ່ມ ບໍລິສັດໂດຍຄວາມສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ກຸ່ມບໍລິສັດຍັງໄດ້ນຳສະເໜີແຍກຂໍ້ມູນດ້ານການເງິນຂອງ ບໍລິສັດ ລາວເວີນ ມະຫາຊົນ ສຳລັບໄລຍະເວລາສາມເດືອນສິ້ນສຸດ 30 ກັນຍາ 2022 ແລະ ໄດ້ປຽບທຽບຕົວເລກໃນບົດອະທິບາຍເລກທີ 11 ເປັນຂໍ້ມູນເພີ່ມເຕີມ. ການນຳສະເໜີນີ້ແມ່ນສອດຄ່ອງກັບກົດລະບຽບ ການລາຍງານ ແລະ ການເປີດເຜີຍຂໍ້ມູນສະບັບເລກທີ 004/ສຄຄຊ, ລົງວັນທີ 28 ມັງກອນ 2019 ທີ່ອອກໂດຍສຳນັກງານຄະນະກຳມະ ການຄຸ້ມຄອງຫຼັກຊັບ ("ສຄຄຊ").

ປີການບັນຊີ

ປີການບັນຊີຂອງບໍລິສັດແມ່ນເລີ່ມແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ.

2.2 *ພື້ນຖານການສົ່ງລວມເອກະສານລາຍງານການເງິນ*

ເອກະສານລາຍງານການເງິນລວມກິດຈະການສຳລັບຫົກເດືອນຕົ້ນປີ ປະກອບດ້ວຍເອກະສານລາຍງານການເງິນລວມກິດຈະການສຳລັບ ຫົກເດືອນຕົ້ນປີຂອງບໍລິສັດ ແລະ ບໍລິສັດໃນເຄືອ ໃນໄລຍະສາມເດືອນ ທີ່ສິ້ນສຸດລົງໃນວັນທີ 30 ກັນຍາ 2022.

ບໍລິສັດໃນເຄືອໄດ້ຖືກສົ່ງລວມຢ່າງເຕັມສ່ວນຈາກວັນທີທີ່ຖືກເຂົ້າຊື້, ເຊິ່ງເປັນວັນທີ່ກຸ່ມບໍລິສັດໄດ້ມີອຳນາດໃນການຄວບຄຸມ, ແລະ ສືບຕໍ່ການສົ່ງລວມບັນຊີຈົນເຖິງວັນທີທີ່ສິ້ນສຸດການຄວບຄຸມ.

ເອກະສານລາຍງານການເງິນຂອງບໍລິສັດໃນເຄືອ ແມ່ນໄດ້ກະກຽມໃນໄລຍະເວລາການລາຍງານດຽວກັນກັບບໍລິສັດແມ່, ໂດຍນຳໃຊ້ ນະໂຍບາຍການບັນຊີທີ່ສອດຄ່ອງ.

ຍອດເຫຼືອລະຫວ່າງກັນໃນກຸ່ມບໍລິສັດ, ລາຍໄດ້ ແລະ ລາຍຈ່າຍ ແລະ ກຳໄລ ຫຼື ການຂາດທຶນທີ່ບໍ່ເກີດຂຶ້ນຈິງທີ່ມາຈາກລາຍ ການເຄື່ອນໄຫວລະຫວ່າງກຸ່ມບໍລິສັດແມ່ນຈະຖືກຫັກລ້າງກັນເຕັມຈຳນວນ.

3. *ລາຍຈ່າຍອາກອນ*

ລາຍຈ່າຍເລື່ອນເວລາກຳໄລ

ລາຍຈ່າຍອາກອນກຳໄລ ຖືກຮັບຮູ້ເຂົ້າໃນເອກະສານລາຍງານການເງິນລວມກິດຈະການສຳລັບສາມເດືອນ ໃນໄລຍະທີ່ມອບອາກອນ ກຳໄລຕາມທີ່ໄດ້ກຳນົດໄວ້ ຕາມກົດໝາຍວ່າດ້ວຍສ່ວຍສາອາກອນຂອງ ສປປ ລາວ. ອີງຕາມສັນຍາສຳປະທານ, ກຸ່ມບໍລິສັດ ໄດ້ຮັບການ ຍົກເວັ້ນ ອາກອນກຳໄລສຳລັບ 10 ປີ ທຳອິດ ພາຍຫຼັງເຄື່ອນໄຫວທຸລະກິດ ເລີ່ມແຕ່ມື້ເຊັນສັນຍາສຳປະທານກັບລັດຖະບານ ແຫ່ງສປປລາວ ແລະ ບໍລິສັດ ລາວເວີນ ມະຫາຊົນ (ນັບແຕ່ວັນທີ 24 ທັນວາ 2003 - 2013). ແລະ ບໍລິສັດ ລາວເວີນສະຫວັນ ຈຳກັດ

3. ***ລາຍຈ່າຍອາກອນ (ຕໍ່)***

(ນັບແຕ່ວັນທີ 22 ກໍລະກົດ 2009 ເຖິງ 22 ກໍລະກົດ 2019) ແລະ ຫຼັງຈາກນັ້ນໄດ້ຮັບການຫຼຸດອັດຕາອາກອນກຳໄລ 50% ຂອງອັດຕາອາກອນປົກກະຕິໃນສຳລັບ 10 ປີຕໍ່ໄປ.

ສຳລັບໄລຍະ 03 ເດືອນ ສິ້ນສຸດລົງໃນວັນທີ 30 ກັນຍາ 2022, ກຸ່ມບໍລິສັດບໍ່ໄດ້ຕັ້ງອາກອນກຳໄລເນື່ອງຈາກການຂາດທຶນຈາກການດຳເນີນທຸລະກິດ.

ອາກອນອື່ນໆ

ອາກອນອື່ນໆທີ່ຕ້ອງຈ່າຍລວມມີອາກອນມູນຄ່າເພີ່ມ ແລະ ອາກອນລາຍໄດ້ສ່ວນບຸກຄົນຂອງພະນັກງານ.

ອາກອນມູນຄ່າເພີ່ມ ແມ່ນຄວາມຮັບຜິດຊອບດ້ານພາສີທີ່ກຳນົດໃນລາຍໄດ້ສຳລັບໄລຍະເວລາທີ່ຄິດໄລ່ໂດຍນຳໃຊ້ອັດຕາອາກອນທີ່ນຳໃຊ້ສຳລັບປີ.

ອາກອນລາຍໄດ້ສ່ວນບຸກຄົນ ແມ່ນອາກອນທີ່ຈ່າຍ ເງິນເດືອນທີ່ຈ່າຍໃຫ້ພະນັກງານໃນໄລຍະເວລາທີ່ກຳນົດໂດຍນຳໃຊ້ອັດຕາອາກອນທີ່ນຳໃຊ້ສຳລັບປີ.

4. **ເງິນສົດ ແລະ ທຽບເທົ່າເງິນສົດ**

	ກ່ອນທົບທວນຄືນ	*ກວດສອບ*
	30 ກັນຍາ 2022	*31 ທັນວາ 2021*
	ກີບ	*ກີບ*
ເງິນສົດໃນຄັງ	84,121,530	142,837,741
ເງິນຝາກຢູ່ທະນາຄານ	4,298,304,975	3,850,226,031
ລວມ	4,382,426,505	3,993,063,772

5. ຊັບສິນບັດ, ອາຄານ ແລະ ອຸປະກອນ

	ທີ່ດິນ ແລະ ອາຄານ ກີບ	*ເຄື່ອງຈັກ ແລະ ອຸປະກອນ ກີບ*	*ພາຫະນະ ກີບ*	*ເຟີນີເຈີ ແລະ ສິ່ງຕິດຕັ້ງ ກີບ*	*ຊັບສິນທີ່ຢູ່ພາຍໃຕ້ ການກໍ່ສ້າງ ແລະ ການຕິດຕັ້ງ ກີບ*	*ລວມ ກີບ*
ຕົ້ນທຶນ						
ນະວັນທີ 01 ມັງກອນ 2022	174,490,062,247	41,314,735,394	9,717,180,915	43,599,556,924	101,155,866	269,222,691,346
ເພີ່ມເຕີມ	-	207,484,270	-	46,597,482	809,072	254,890,824
ນະວັນທີ 30 ກັນຍາ 2022	174,490,062,247	41,522,219,664	9,717,180,915	43,646,154,406	101,964,938	269,477,582,170
ຄ່າຫຼ້ຍຫ້ຽນສະສົມ						
ນະວັນທີ 01 ມັງກອນ 2022	(50,409,346,156)	(33,678,189,663)	(9,610,170,152)	(34,896,581,064)	-	(128,594,287,036)
ຄ່າຫຼ້ຍຫ້ຽນພາຍໃນປີ	(3,345,802,171)	(1,757,765,834)	(107,010,763)	(1,376,238,056)	-	(6,586,816,824)
ນະວັນທີ 30 ກັນຍາ 2022	(53,755,148,326)	(35,435,955,498)	(9,717,180,915)	(36,272,819,120)	-	(135,181,103,859)
ມູນຄ່າຕາມບັນຊີ ສຸດທິ						
ນະວັນທີ 01 ມັງກອນ 2022	124,006,832,553	7,636,545,731	107,010,763	8,702,975,860	101,155,866	140,554,520,773
ນະວັນທີ 30 ກັນຍາ 2022	120,734,913,920	6,086,264,166	0	7,373,335,286	101,964,938	134,296,478,311

6. ຊັບສິນເພື່ອການລົງທຶນ

	ຊັບສິນເພື່ອການລົງທຶນ ສົມບຸນແບບ	*ຊັບສິນເພື່ອການລົງທຶນຢູ່ ພາຍໃຕ້ການພັດທະນາ*	*ລວມ*
	ກີບ	*ກີບ*	*ກີບ*
ຕົ້ນທຶນ			
ນະວັນທີ 01 ມັງກອນ 2022	468,587,375,805	-	468,587,375,805
ເພີ່ມເຕີມ	-	-	-
ນະວັນທີ 30 ກັນຍາ 2022	468,587,375,805	-	468,587,375,805
ຄ່າຫຼ້ຍຫ້ຽນສະສົມ			
ນະວັນທີ 01 ມັງກອນ 2022	(33,115,209,628)	-	(33,115,209,628)
ຄ່າຫຼ້ຍຫ້ຽຍພາຍໃນປີ	(5,077,642,007)	-	(5,077,642,007)
ນະວັນທີ 30 ກັນຍາ 2022	(38,191,448,440)	-	(38,191,448,440)
ມູນຄ່າຕາມບັນຊີ ສຸດທິ			
ນະວັນທີ 01 ມັງກອນ 2022	435,472,166,177	-	435,472,166,177
ນະວັນທີ 30 ກັນຍາ 2022	430,395,927,365	-	430,395,927,365

7. ເງິນກູ້ຢືມ

	ກ່ອນທົບທວນຄືນ 30 ກັນຍາ 2022	*ກວດສອບ 31 ທັນວາ 2021*
	ກີບ	*ກີບ*
ເງິນກູ້ຢືມ ຈາກພາກສ່ວນອື່ນ (*)	30,399,873,525	30,399,873,525
ເງິນກູ້ຢືມ ຈາກທະນາຄານ (**)	21,596,220,436	16,440,480,000
	51,996,093,961	**46,840,353,525**
ເຊິ່ງ:		
ພາກສ່ວນ ໄລຍະສັ້ນ	*33,206,133,967*	*30,399,873,525*
ພາກສ່ວນ ໄລຍະຍາວ	*18,789,959,994*	*14,007,926,448*

(*) ເງິນກູ້ຢືມຈາກພາກສ່ວນອື່ນ ສະແດງເຖິງເງິນກູ້ຢືມທີ່ບໍ່ມີຫຼັກປະກັນຈາກອະດີດຜູ້ຖືຫຸ້ນລາຍໃຫຍ່ຂອງກຸ່ມບໍລິສັດ. ເງິນກູ້ຢືມເຫຼົ່ານີ້ບໍ່ມີດອກເບ້ຍ ແລະ ຄົບກຳນົດຮຽກເກັບ ແລະ ບໍ່ມີການເຄື່ອນໄຫວພາຍໃນໄລຍະ.

7. ເງິນກູ້ຢືມ (ຕໍ່)

(**) ລາຍລະອຽດຂອງເງິນກູ້ຢືມຈາກທະນາຄານມີດັ່ງນີ້:

ຜູ້ໃຫ້ກູ້ & ສັນຍາ ເລກທີ	*ຍອດເຫລືອທ້າຍ ນະ ວັນທີ 30 ກັນຍາ 2022 ກີບ*	*ໄລຍະເວລາ*	*ວັນໝົດ ກຳນົດ*	*ອັດຕາ ດອກ ເບ້ຍ*	*ຫຼັກຊັບຄ້ຳປະກັນ*
ທະນາຄານ BIC ລາວ. LO2019/045	21,596,220,436	11 ປີ	1 ຕຸລາ 2031	9.0%	ທີ່ດິນ ແລະ ອາຄານ ໃນໃບຕາດິນ ເລກທີ 291 ແລະ ການມອບຫມາຍ ການຊຳລະລ່ວງຫນ້າ ຄ່າເຊົ່າພື້ນທີ່ທັງຫມົດຈາກ ສູນການຄ້າໄອເຕັກ , ໄອເຕັກລາວ ແລະ ສ່ວນນ້ຳ
	21,596,220,436				

8. ອາກອນກຳໄລ

ພາຍໃຕ້ສັນຍາການສຳປະທານທີ່ກ່ຽວຂ້ອງ, ກຸ່ມບໍລິສັດໄດ້ຮັບສິ່ງຈູງໃຈໃນການລົງທຶນ ລວມທັງການຍົກເວັ້ນອາກອນກຳໄລ ວິສາຫະກິດ ("ອາກອນກຳໄລ") ເປັນເວລາ 10 ປີ ທຳອິດຫຼັງຈາກເລີ່ມດຳເນີນທຸລະກິດ ແລະ ສືບຕໍ່ຫຼຸດອັດຕາອາກອນ 50% ຈາກອັດຕາອາກອນກຳໄລປົກະຕິສຳລັບອີກ 10 ປີຕໍ່ໜ້າ. ລາຍລະອຽດຂອງໄລຍະເວລາທີ່ໄດ້ຮັບການຍົກເວັ້ນອາກອນ ມີດັ່ງລຸ່ມນີ້:

	ໄລຍະເວລາທີ່ໄດ້ຮັບການຍົກເວັ້ນ
ບໍລິສັດ ລາວເວີນ ສະຫວັນ ຈຳກັດ.	ແຕ່ 24 ທັນວາ 2003 ຫາ 24 ທັນວາ 2013
ບໍລິສັດ ລາວເວີນ ມະຫາຊົນ	ແຕ່ 22 ກໍລະກົດ 2009 ຫາ 22 ກໍລະກົດ 2019

ພາຍໃຕ້ກົດໝາຍວ່າດ້ວຍອາກອນລາຍໄດ້ສະບັບໃໝ່ ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019, ເຊິ່ງມີຜົນບັງຄັບໃຊ້ພາຍໃນ ຫຼື ຫຼັງຈາກວັນທີ 01 ມັງກອນ 2020, ອັດຕາອາກອນກຳໄລ ປົກກະຕິແມ່ນ 20%. ອີງຕາມຂໍ້ຕົກລົງການສຳປະທານ ອັດຕາອາກອນທີ່ມີຜົນບັງຄັບໃຊ້ສຳລັບກຸ່ມບໍລິສັດໃນປີ 2022 ແມ່ນ 10%.

ລາຍການເສຍອາກອນຂອງບໍລິສັດຂຶ້ນຢູ່ກັບການກວດສອບຂອງເຈົ້າໜ້າທີ່ສ່ວຍສາອາກອນ ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນ ແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນ ອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງສຸດທ້າຍ ຂອງເຈົ້າໜ້າທີ່ສ່ວຍສາອາກອນ.

9. ກຳໄລຕໍ່ຮຸ້ນ

	ກ່ອນທິບທວນຄືນ ສຳລັບໄລຍະ 3 ເດືອນ ວັນທີ 30 ກັນຍາ 2022 ກີບ	*ກ່ອນທິບທວນຄືນ ສຳລັບໄລຍະ 3 ເດືອນ ວັນທີ 30 ກັນຍາ 2021 ກີບ*
ຂາດທຶນສຸດທິຈາກຜູ້ຖືຮຸ້ນສາມັນ ເປັນກີບ	(31,881,978,747)	(5,102,323,111)
ຈຳນວນຮຸ້ນສາມັນສະເລ່ຍຖ່ວງນ້ຳໜັກ (*)	39,506,909	39,506,909
ກຳໄລພື້ນຖານຕໍ່ຮຸ້ນ	**(806)**	**(129)**

ກຳໄລພື້ນຖານຕໍ່ຮຸ້ນແມ່ນໄດ້ຖືກຄິດໄລ່ໂດຍການແບ່ງກຳໄລໃຫ້ຜູ້ຖືຮຸ້ນດ້ວຍວິທີການສະເລ່ຍຮຸ້ນສາມັນສະເລ່ຍຖ່ວງນ້ຳໜັກ ທີ່ໄດ້ວາງອອກ.

(*) ຈຳນວນຮຸ້ນສາມັນສະເລ່ຍຖ່ວງນ້ຳໜັກ ແມ່ນໄດ້ຖືກຄິດໄລ່ໂດຍອີງຕາມຂໍ້ມູນຕໍ່ໄປນີ້:

- ຈຳນວນຮຸ້ນເລີ່ມຈາກວັນທີ 01 ມັງກອນ 2022 ເຖິງ 30 ກັນຍາ 2022 ແມ່ນ 39,560,909.

10. ເຫດການທີ່ສຳຄັນ

ການແຜ່ລະບາດຂອງພະຍາດ ໂຄໂລນາໄວຣັດ 2019 ("COVID-19") ໃນໄລຍະປີ 2021 ແລະ ປີ 2022 ມີຜົນກະທົບທີ່ບໍ່ດີຢ່າງຕໍ່ເນື່ອງ ເຖິງແມ່ນວ່າພະຍາດດັ່ງກ່າວໄດ້ມີການຫຼຸດໜ້ອຍ ຫຼື ຜ່ອນຄາຍລົງແລ້ວກໍຕາມ ແຕ່ຜົນກະທົບດັ່ງກ່າວຍັງສົ່ງຜົນຕໍ່ການດຳເນີນງານສຳລັບໄລຍະຫວລາ 3 ເດືອນ ທີ່ສິ້ນສຸດລົງໃນວັນທີ 30 ກັນຍາ 2022.

ກຸ່ມບໍລິສັດໄດ້ປະຕິບັດການປະເມີນເບື້ອງຕົ້ນກ່ຽວກັບຜົນກະທົບທີ່ເປັນໄປໄດ້ຂອງ Covid-19 ຕໍ່ການດຳເນີນງານ, ກະແສເງິນສົດ ແລະ ສະພາບການເງິນລວມທັງການດຳເນີນງານຂອງຜູ້ເຊົ່າ ແລະ ລູກຄ້າ. ຄະນະບໍລິຫານໃຫ້ທັດສະນະວ່າທຸລະກິດໂດຍລວມຂອງກຸ່ມບໍລິສັດບໍ່ໄດ້ຮັບຜົນກະທົບຢ່າງຫຼວງຫຼາຍຈາກໂລກລະບາດ ແລະ ມາດຕະການຂອງກຸ່ມບໍລິສັດ.

11. ຂໍ້ມູນເພີ່ມເຕີມ

ຕາຕະລາງລຸ່ມນີ້ໄດ້ສະແດງເຖິງໃບລາຍງານຖານະທາງການເງິນ ແລະ ໃບລາຍງານຜົນໄດ້ຮັບ ແຍກກິດຈະການຂອງບໍລິສັດ ລາວເວີນ ມະຫາຊົນ ເທົ່ານັ້ນ. ການນຳສະເໜີນີ້ແມ່ນສອດຄ່ອງກັບກົດລະບຽບການລາຍງານ ແລະ ການເປີດເຜີຍຂໍ້ມູນທີ່ ອອກໂດຍ ສຄຄຊ.

ໃບລາຍງານຖານະການເງິນ - ບໍລິສັດ ລາວເວີນ ມະຫາຊົນ

	ກ່ອນທີ່ບທວນຄືນ 30 ກັນຍາ 2022 ກີບ	*ກວດສອບ 31 ທັນວາ 2021 ກີບ*
ຊັບສິນ		
ຊັບສິນໝຸນວຽນ		
ເງິນສົດ ແລະ ທຽບເທົ່າເງິນສົດ	4,371,611,506	3,955,776,927
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ	77,194,807,908	51,394,041,630
ເງິນກູ້ໃຫ້ພາກສ່ວນທີ່ກ່ຽວຂ້ອງ	50,405,822,865	50,733,406,203
ເຄື່ອງໃນສາງ	3,022,104,083	2,749,444,618
ຊັບສິນໝຸນວຽນອື່ນໆ	11,764,526,725	6,999,583,953
ລວມຊັບສິນໝຸນວຽນ	**146,758,873,087**	**115,832,253,332**
ຊັບສິນບໍ່ໝຸນວຽນ		
ການລົງທຶນໃນບໍລິສັດໃນເຄືອ	30,287,328,874	30,287,328,874
ຊັບສິນຖັດ, ອາຄານ ແລະ ອຸປະກອນ	90,968,264,623	96,058,018,460
ຊັບສິນເພື່ອການລົງທຶນ	393,366,338,895	398,060,194,278
ຊັບສິນທີ່ບໍ່ມີຕົວຕົນ	213,630,025	98,152,365
ຊັບສິນບໍ່ໝຸນວຽນອື່ນໆ	5,677,939,525	41,566,930,383
ລວມຊັບສິນບໍ່ໝຸນວຽນ	**520,513,501,941**	**566,070,624,360**
ລວມຊັບສິນ	**667,272,375,028**	**681,902,877,691**

11. ຂໍ້ມູນເພີ່ມເຕີມ (ຕໍ່)

ໃບລາຍງານຖານະການເງິນ - ບໍລິສັດ ລາວເວີນ ມະຫາຊົນ (ຕໍ່)

	ກ່ອນທົບທວນຄືນ 30 ກັນຍາ 2022 ກີບ	*ກວດສອບ 31 ທັນວາ 2021 ກີບ*
ໜີ້ສິນ ແລະ ທຶນເຈົ້າຂອງ		
ໜີ້ສິນໝຸນວຽນ		
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	120,957,064,508	123,422,561,782
ເງິນກູ້ຢືມໄລຍະສັ້ນ	30,399,873,525	32,832,427,077
ລາຍຮັບຮັບລ່ວງໜ້າໄລຍະສັ້ນ	4,240,667,822	4,498,582,442
ໜີ້ສິນໝຸນວຽນອື່ນໆ	38,217,898,762	34,185,224,686
ລວມໜີ້ສິນໝຸນວຽນ	**193,815,504,617**	**194,938,795,988**
ໜີ້ສິນບໍ່ໝຸນວຽນ		
ເງິນກູ້ຢືມໄລຍະຍາວ	21,596,220,436	14,007,926,448
ລາຍຮັບຮັບລ່ວງໜ້າ - ໄລຍະຍາວ	307,716,019,361	311,325,683,184
ລວມໜີ້ສິນບໍ່ໝຸນວຽນ	**329,312,239,797**	**325,333,609,632**
ລວມໜີ້ສິນ	**523,127,744,415**	**520,272,405,620**
ທຶນເຈົ້າຂອງ		
ທຶນຈົດທະບຽນ	79,121,818,000	79,121,818,000
ສ່ວນເກີນມູນຄ່າຮຸ້ນ	33,581,993,681	33,581,993,681
ຄັງສຳຮອງຕາມກົດໝາຍ	13,357,587,776	13,357,587,776
ກຳໄລສະສົມ	18,083,231,157	35,569,072,615
ລວມທຶນເຈົ້າຂອງ	**144,144,630,614**	**161,630,472,071**
ລວມໜີ້ສິນ ແລະ ທຶນເຈົ້າຂອງ	**667,272,375,028**	**681,902,877,691**

11 ຂໍ້ມູນເພີ່ມເຕີມ (ຕໍ່)

ໃບລາຍງານຜົນການດຳເນີນງານ - ບໍລິສັດ ລາວເວີ້ນ ມະຫາຊົນ

	ກ່ອນທຶບທວນຄືນ ສຳລັບໄລຍະ 3 ເດືອນ ວັນທີ 30 ກັນຍາ 2022 ກີບ	*ກ່ອນທຶບທວນຄືນ ສຳລັບໄລຍະ 3 ເດືອນ ວັນທີ 30 ກັນຍາ 2021 ກີບ*
ລາຍຮັບຈາກການຂາຍ ແລະ ການບໍລິການ	32,598,370,869	5,169,829,735
ຕົ້ນທຶນໃນການຂາຍ ແລະ ການບໍລິການ	(21,369,631,882)	(4,927,402,764)
ກຳໄລຂັ້ນຕົ້ນ	**11,228,738,987**	**3,224,178,515**
ລາຍຈ່າຍບໍລິຫານ	(11,932,358,940)	(4,648,286,289)
ລາຍຮັບອື່ນໆ	315,684,362	92,889,926
ກຳໄລ/ຂາດທຶນຈາກອັດຕາແລກປ່ຽນ	(1,676,196,909)	228,855,538
ຂາດທຶນຈາກການດຳເນີນງານ	**(2,064,132,501)**	**(4,084,113,854)**
ລາຍຮັບດອກເບ້ຍ	(14,848,775,686)	15,052,473
ລາຍຈ່າຍດອກເບ້ຍ	(572,933,270)	(322,892,115)
ຂາດທຶນ ກ່ອນຫັກອາກອນກຳໄລ	**(17,485,841,458)**	**(4,391,953,496)**
ອາກອນກຳໄລ	-	-
ຂາດທຶນພາຍໃນໄລຍະ	**(17,485,841,458)**	**(4,391,953,496)**

ທ່ານ ນາງ ສີພອນຄຳ ດວງດາລາ
ຜູ້ອຳນວຍການໃຫຍ່

ທ່ານ ນາງ ລຳເງິນ ມາດມະນີວົງ
ຮອງຜູ້ອຳນວຍການໃຫຍ່ ຝ່າຍບັນຊີ-ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

14 ພະຈິກ 2022